Washington Apple Health

# Apple Health Expansion

## ຄໍາຖາມທີ່ມັກຖາມ

ຄໍາຖາມທີ່ມັກຖາມ (FAQ) ຕໍ່ໄປນີ້ໃຫ້ຂໍ້ມູນສໍາລັບລູກຄ້າທີ່ເປັນໄປໄດ້ຂອງ Apple Health Expansion ແລະ ຜູ້ທີ່ຊ່ວຍເຫຼືອເຂົາເຈົ້າ. ເບິ່ງ **Apple Health Expansion webpage** ເພື່ອຮຽນຮູ້ເພີ່ມເຕີມ.

## Apple Health Expansion ແມ່ນຫຍັງ

ອົງການເບິ່ງແຍງສຸຂະພາບ (Health Care Authority, HCA) ໄດ້ຂະຫຍາຍການມີສິດໄດ້ຮັບ Apple Health ສໍາລັບຜູ້ໃຫຍ່, ໂດຍບໍ່ຄໍານຶງເຖິງສະຖານະການເຂົ້າເມືອງ. ໂຄງການໃໝ່ນີ້ເອີ້ນວ່າ Apple Health Expansion ແລະ ໄດ້ເປີດບໍລິການໃນວັນທີ 1 ກໍລະກົດ 2024. Apple Health Expansion ຈະໃຫ້ຄວາມຄຸ້ມຄອງແກ່ບຸກຄົນອາຍຸ 19 ປີຂຶ້ນໄປຜູ້ທີ່ບໍ່ມີຄຸນສົມ ບັດເຂົ້າຮ່ວມ ໂຄງການ Apple Health ອື່ນ. ໃນຂອບເຂດທີ່ສະພານິຕິບັນຍັດແນະນໍາ, ໂຄງການໃໝ່ນີ້ຖືກອອກແບບມາເພື່ອສະທ້ອນເຖິງການບໍລິການທີ່ສະໜອງໃຫ້ແກ່ບຸກຄົນທີ່ລົງທະບຽນເຂົ້າຮ່ວມການດູແລເບິ່ງແຍງ Apple Health (Medicaid) ແບບມີການຈັດການ.

## ການລົງທະບຽນ ແລະ ການມີສິດ

### ໃຜແດ່ມີສິດ?

ທ່ານອາດຈະມີສິດເຂົ້າຮ່ວມໂຄງການນີ້ຖ້າທ່ານ:

- ເປັນຜູ້ຢູ່ອາໄສໃນລັດວໍຊິງຕັນ ທີ່ມີອາຍຸ 19 ປີຂຶ້ນໄປ,
- ມີລາຍຮັບທີ່ນັບໄດ້ບໍ່ເກີນ 138% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ,
- ບໍ່ມີສິດສໍາລັບໂຄງການ Apple Health ອື່ນທີ່ອີງໃສ່ສະຖານະການເຂົ້າເມືອງ,
    - ຖ້າທ່ານເປັນຜູ້ເຂົ້າເມືອງທີ່ຍັງຕອບສະໜອງບໍ່ໄດ້ໄລຍະລໍຖ້າຫ້າປີເພື່ອໃຫ້ມີສິດໄດ້ຮັບ Apple Health ທ່ານຈະບໍ່ມີຄຸນສົມບັດໄດ້ຮັບ Apple Health Expansion. ນີ້ເປັນຍ້ອນການມີສະຖານະຄົນເຂົ້າເມືອງທີ່ເຮັດໃຫ້ທ່ານມີສິດໄດ້ຮັບເງິນຫຼຸດຢ່ອນພາສີຜ່ານ *Washington Healthplanfinder*. ບຸກຄົນບໍ່ມີເອກະສານມີຄຸນສົມບັດໄດ້ຮັບຄວາມຄຸ້ມຄອງ.
- ບໍ່ຖືພາ ຫຼື ບໍ່ມີເຄີຍສິ້ນສຸດການຖືພາໃນ 12 ເດືອນຜ່ານມາ ແລະ
- ບໍ່ມີສິດໄດ້ຮັບແຈກເບ້ຍປະກັນສຸຂະພາບທີ່ມີຄຸນສົມບັດຄົບຖ້ວນ (QHP) ທີ່ມີເງິນຫຼຸດຢ່ອນພາສີກັບສຸຂະພາບລ່ວງໜ້າ (APTC) ຫຼື ໂຄງການຊ່ວຍເຫຼືອດ້ານການແພດທີ່ລັດຖະບານກາງໃຫ້ທຶນ.

ຮຽນຮູ້ກ່ຽວກັບການມີສິດເຂົ້າຮ່ວມໂຄງການ Apple Health ອື່ນໆໄດ້ທີ່ **hca.wa.gov/apple-health-eligibility**.

### ຈະເປັນແນວໃດຖ້າຂ້ອຍສະໝັກຂໍເອົາຄວາມຄຸ້ມຄອງ ເພາະວ່າການລົງທະບຽນເຕັມແລ້ວ?

ຖ້າທ່ານສະໝັກຂໍເອົາຄວາມຄຸ້ມຄອງ ແລະ ຖືກປະຕິເສດ ເພາະວ່າເຕັມແລ້ວ, ຈະບໍ່ມີຂັ້ນຕອນເພີ່ມເຕີມທີ່ທ່ານຈໍາເປັນຕ້ອງເຮັດ. ຍັງມີຄວາມເປັນໄປໄດ້ທີ່ທ່ານອາດຈະໄດ້ຮັບການສຸ່ມເລືອກໃຫ້ລົງທະບຽນ ຖ້າພື້ນທີ່ເປີດໃນໂຄງການ. ທ່ານຈະໄດ້ຮັບການແຈ້ງບອກການມີສິດ ຖ້າທ່ານໄດ້ຮັບເລືອກໃຫ້ລົງທະບຽນຜ່ານວິທີການສື່ສານແຈ້ງບອກທີ່ທ່ານເລືອກ (ອີເມວ ຫຼື ຈົດໝາຍໄປສະນີ).

ຖ້າທ່ານບໍ່ທັນໄດ້ສະໝັກ, ໃຫ້ປະກອບຄໍາຮ້ອງສະໝັກສໍາລັບ Apple Health Expansion ເພື່ອຮັບການພິຈາລະນາຖ້າພື້ນທີ່ເປີດ ແລະ ເພື່ອຮຽນຮູ້ກ່ຽວກັບທາງເລືອກຄວາມຄຸ້ມຄອງອື່ນ.

## ຂ້ອຍຈະສະໝັກເອົາ Apple Health Expansion ໄດ້ແນວໃດ?

ທ່ານມີຫຼາຍທາງເລືອກໃນການສະໝັກເອົາ ຫຼື ຕໍ່ອາຍຸຄວາມຄຸ້ມຄອງ ໂດຍມີການຊ່ວຍເຫຼືອທີ່ມີໃຫ້ເປັນຫຼາຍກວ່າ 200 ພາສາ.

ຖ້າທ່ານມີອາຍຸ **19 ປີຫາ 64 ປີ**:

- **ອອນລາຍ**: ໄປທີ່ *Washington Healthplanfinder*. ເລືອກປຸ່ມ "Apply Now".
- **ແອັບມືຖື:** ດາວໂຫຼດ ແອັບ WAPlanfinder. ເລືອກ "sign in" ຫຼື "create an account".
- **ໂທລະສັບ**: ໂທຫາສູນຊ່ວຍເຫຼືອລູກຄ້າຂອງ *Washington Healthplanfinder* ທີ່ເບີ 1-855-923-4633.
- **ເຈ້ຍ**: ສົ່ງ ຄໍາຮ້ອງສະໝັກເອົາຄວາມຄຸ້ມຄອງເບິ່ງແຍງສຸຂະພາບ (18-001P).
- **ໄປດ້ວຍຕົນເອງ**: ພະນັກງານປະຈໍາສະຖານທີ່ສາມາດຊ່ວຍທ່ານສະໝັກເອົາຄວາມຄຸ້ມຄອງສຸຂະພາບໄດ້ໂດຍບໍ່ເສຍຄ່າໃຊ້ຈ່າຍເພີ່ມເຕີມ.
    - ການຊ່ວຍເຫຼືອລົງທະບຽນປະຈໍາສະຖານທີ່

ທ່ານອາດຈະຈໍາເປັນຕ້ອງໃຫ້ເອກະສານເພື່ອຢັ້ງຢືນຕົວຕົນຂອງທ່ານໃນ *Washington Healthplanfinder*. ເບິ່ງລາຍການ **ເອກະສານທີ່ຍອມຮັບໄດ້** ທີ່ທ່ານສາມາດໃຊ້ເພື່ອພິສູດຕົວຕົນຂອງທ່ານ. ໂປຣແກຣມນໍາທາງສາມາດກວດຢັ້ງຢືນຕົວຕົນຂອງທ່ານໄດ້ໂດຍບໍ່ກໍານົດໃຫ້ທ່ານຕ້ອງອັບໂຫຼດເອກະສານໃນ *Washington Healthplanfinder*.

ຖ້າທ່ານມີອາຍຸ **65 ປີຂຶ້ນໄປ:**

- **ອອນລາຍ**: ໄປທີ່ *Washington Connection*. ເລືອກ "Apply Now".
- **ເຈ້ຍ**: ສົ່ງ ຄໍາຮ້ອງສະໝັກເອົາຄວາມຄຸ້ມຄອງເບິ່ງແຍງສຸຂະພາບສໍາລັບຜູ້ສູງອາຍຸ, ຕາບອດ, ພິການ/ໄລຍະຍາວ (HCA 18-005).
- **ໂທລະສັບ:** ຂໍເອົາຄໍາຮ້ອງສະໝັກໂດຍການໂທຫາ 1-877-501-2233.
- **ໄປດ້ວຍຕົນເອງ**: ໄປທີ່ ຫ້ອງການພະແນກບໍລິການສັງຄົມ ແລະ ສຸຂະພາບ (Department of Social and Health Services, DSHS).

ຖ້າມີການຍອມຮັບທ່ານ, ທ່ານຈະໄດ້ຮັບບັດບໍລິການ ProviderOne ໃນປະມານສອງອາທິດ. ຄວາມຄຸ້ມຄອງຈະເລີ່ມໃນມື້ທໍາອິດຂອງເດືອນທີ່ສົ່ງຄໍາຮ້ອງສະໝັກ. ທາງມີຕົວເລືອກເພື່ອເລືອກແຜນສຸຂະພາບທາງອອນລາຍ ຫຼື ທ່ານຈະໄດ້ຮັບການລົງທະບຽນເຂົ້າຮ່ວມແຜນໃດໜຶ່ງໂດຍອັດຕະໂນມັດ.

ຖ້າທ່ານໄດ້ເລີ່ມຄໍາຮ້ອງສະໝັກຂອງທ່ານແລ້ວ ແລະ ບໍ່ແນ່ໃຈວ່າມັນສໍາເລັດຫຼືບໍ່, ພວກເຮົາສົ່ງເສີມໃຫ້ທ່ານເຂົ້າສູ່ລະບົບບັນຊີຂອງທ່ານ ຫຼື ຕິດຕໍ່ໜຶ່ງໃນທີມງານບໍລິການລູກຄ້າຂ້າງເທິງເພື່ອກວດເບິ່ງສະຖານະຄໍາຮ້ອງສະໝັກຂອງທ່ານ.

**ໝາຍເຫດ**: ຈໍາເປັນຕ້ອງສົ່ງຄໍາຮ້ອງສະໝັກດຽວເທົ່ານັ້ນ. ຖ້າບາງຄົນສະໝັກເອົາຄວາມຄຸ້ມຄອງ ແລະ ຖືກປະຕິເສດ ເພາະວ່າເຕັມຂີດຈໍາກັດການລົງທະບຽນແລ້ວ, ຈະບໍ່ມີຂັ້ນຕອນເພີ່ມເຕີມໃຫ້ເຂົາເຈົ້າເຮັດອີກ.

## ຂ້ອຍຈໍາເປັນຕ້ອງໃຊ້ບັດປະຈໍາຕົວ (ID) ເພື່ອສະໝັກຂໍ Apple Health Expansion ບໍ່?

ບໍ່, ທ່ານບໍ່ຈໍາເປັນຕ້ອງໃຫ້ບັດ ID ເພື່ອສະໝັກ. ແນວໃດກໍຕາມ, ການໃຫ້ບັດ ID ເຮັດໃຫ້ງ່າຍຂຶ້ນໃນການພິສູດຢັ້ງຢືນຕົວຕົນຂອງທ່ານໃນລະບົບສະໝັກຮ້ອງຂໍ.

## ມີຈັກຄົນລົງທະບຽນເຂົ້າຮ່ວມ Apple Health Expansion?

HCA ຈະລົງທະບຽນສູງສຸດ 13,000 ຄົນເຂົ້າຮ່ວມ Apple Health Expansion. ຕົວເລກນີ້ອາດຈະປ່ຽນແປງຕາມທີ່ HCA ຮັບປະກັນວ່າພວກເຮົາຢູ່ພາຍໃຕ້ງົບປະມານສໍາລັບໂຄງການ.

ພວກເຮົາສົ່ງເສີມໃຫ້ບຸກຄົນທີ່ສົນໃຈສະໝັກ **ລົງທະບຽນຮັບອັບເດດທາງອີເມວ** ແລະ ເບິ່ງ **ປະກາດແຈ້ງການລົງທະບຽນ** ສາລັບອັບເດດປົກກະຕິ. ທ່ານສາມາດສົ່ງຄໍາຖາມກ່ຽວກັບວ່າອັນນີ້ໝາຍເຖິງຫຍັງສໍາລັບທ່ານ ແລະ ຄອບຄົວຂອງທ່ານ ແລະ ສິ່ງທີ່ຄາດຫວັງໃນຕະຫຼອດຊຸມເດືອນຈະມາເຖິງ ໄປຍັງ **ກ່ອງຈົດໝາຍຂອງ Apple Health Expansion**.

## ຄົນຖືພາມີສິດໄດ້ຮັບ Apple Health Expansion ບໍ່?

ຖ້າທ່ານສະໝັກເອົາ Apple Health Expansion ແລະ ບອກວ່າທ່ານຖືພາ, ທ່ານສາມາດເລືອກຮັກສາຄວາມຄຸ້ມຄອງປັດຈຸບັນຂອງທ່ານໄວ້ໄດ້, ຫຼືບໍ່ດັ່ງນັ້ນທ່ານຈະຖືກຍ້າຍໄປຍັງ Apple Health ສໍາລັບຄົນຖືພາ. ໂຄງການນີ້ໃຫ້ຄວາມຄຸ້ມຄອງແກ່ບຸກຄົນຖືພາທີ່ມີລາຍຮັບຢູ່ທີ່ ຫຼື ຕໍ່າກວ່າມາດຕະຖານລາຍຮັບຂອງ Apple Health.

ຄວາມຄຸ້ມຄອງຫຼັງການຖືພາ (APC) ຄຸ້ມຄອງບຸກຄົນເປັນເວລາ 12 ເດືອນຫຼັງຈາກສິ້ນສຸດການຖືພາ. ໂຄງການເຫຼົ່ານີ້ມີໃຫ້ໂດຍບໍ່ຄໍານຶງເຖິງການເປັນພົນລະເມືອງ ຫຼື ສະຖານະການເຂົ້າເມືອງ. ຮຽນຮູ້ເພີ່ມເຕີມທີ່ **hca.wa.gov/apple-health-pregnant-individuals**.

## Apple Health Expansion ລວມເອົາຜູ້ອົບພະຍົບທີ່ຢູ່ຢ່າງຖືກກົດໝາຍບໍ?

ຖ້າທ່ານເປັນຜູ້ອົບພະຍົບ, ທ່ານໄດ້ຮັບການຍົກເວັ້ນຈາກໄລຍະຫ້າມຫ້າປີ ແລະ ອາດຈະມີຄຸນສົມບັດໄດ້ຮັບໂຄງການ Apple Health ອື່ນ. ນີ້ຈະເຮັດໃຫ້ທ່ານບໍ່ມີສິດໄດ້ຮັບ Apple Health Expansion.

## ຂ້ອຍມີສະຖານະການດໍາເນີນລໍຕັດບັນຊີສໍາລັບການມາເຖິງໃນໄວເດັກ (Deferred Action for Childhood Arrivals, DACA). ຂ້ອຍມີສິດໄດ້ຮັບ Apple Health Expansion ບໍ?

ແມ່ນ, ທ່ານສາມາດສະໝັກ ແລະ ໄດ້ຮັບອະນຸມັດສໍາລັບ Apple Health Expansion ດ້ວຍສະຖານະ DACA ຖ້າທ່ານຕອບສະໜອງໄດ້ເກນເງື່ອນໄຂການມີສິດ.

## ຂໍ້ແນະນໍາກົດລະບຽບ DACA ວັນທີ 1 ພະຈິກ 2024 ມີຜົນກະທົບແນວໃດຕໍ່ Apple Health Expansion?

ພາຍໃຕ້ກົດລະບຽບໃໝ່ນີ້, ໂດຍເລີ່ມແຕ່ວັນທີ 1 ພະຈິກ 2024, ຜູ້ໄດ້ຮັບ DACA ຈະຖືວ່າຢູ່ຢ່າງຖືກກົດໝາຍ ເຊິ່ງເຮັດໃຫ້ເຂົາເຈົ້າມີສິດໄດ້ຮັບເງິນອຸດໜູນລັດຖະບານກາງເພື່ອສະໝັກເອົາ QHP ຜ່ານ *Washington Healthplanfinder*. ໂດຍເປັນສ່ວນໜຶ່ງຂອງການຈັດຕັ້ງປະຕິບັດ, ຜູ້ໄດ້ຮັບ DACA ທີ່ມີສິດໄດ້ຮັບ Apple Health Expansion ຈະປ່ຽນຜ່ານຈາກ Apple Health Expansion ໄປສູ່ຄວາມຄຸ້ມຄອງ QHP ແບບໄດ້ເງິນອຸດໜູນ.

- **ໝາຍເຫດ**: ວັນທີຈັດຕັ້ງປະຕິບັດຕົວຈິງອາດຈະໄດ້ຮັບຜົນກະທົບຈາກການຮ້ອງຟ້ອງລັດຖະບານກາງ ແລະ/ຫຼື ກໍານົດເວລາການຈັດຕັ້ງປະຕິບັດຂອງລັດຕ່າງໆ.

ໃນເວລາຈັດຕັ້ງປະຕິບັດ, ຜູ້ໄດ້ຮັບ DACA ສາມາດຊີ້ບອກ (ບໍ່, N) ຕໍ່ໄພພົບລະເມືອງ ແລະ (ແມ່ນ, Y) ຕໍ່ຢູ່ຢ່າງຖືກກົດໝາຍ.

- ຈາກນັ້ນລູກຄ້າຈະຖືກກວດຄັດສໍາລັບ QHP ທີ່ກ່ຽວຂ້ອງ, ເງິນອຸດໜູນລັດຖະບານກາງ ແລະ ລັດຜ່ານ *Washington Healthplanfinder*.

ຜູ້ໄດ້ຮັບ DACA ຍັງຄວນສະໝັກເອົາຄວາມຄຸ້ມຄອງຄືເກົ່າ ໂດຍການສົ່ງຄໍາຮ້ອງສະໝັກຜ່ານ *Washington Healthplanfinder.* ຜູ້ໄດ້ຮັບ DACA ຈະໄດ້ຮັບຂໍ້ມູນເພີ່ມເຕີມກ່ອນເດືອນພະຈິກ 2024.

## ມີທາງເລືອກອື່ນຫຍັງແດ່ໃຫ້ແກ່ຂ້ອຍທີ່ເປັນຜູ້ເຂົ້າເມືອງ ຖ້າຂ້ອຍບໍ່ມີຄຸນສົມບັດໄດ້ຮັບ Apple Health Expansion?

ທ່ານມີທາງເລືອກການດູແລເບິ່ງແຍງສຸຂະພາບ ຖ້າທ່ານເປັນຜູ້ເຂົ້າເມືອງທີ່ບໍ່ມີຄຸນສົມບັດໄດ້ຮັບ Apple Health Expansion ຫຼື ພະຍາຍາມລົງທະບຽນແຕ່ບໍ່ໄດ້ ເພາະວ່າໂຄງການເຕັມແລ້ວ. ຜູ້ເຂົ້າເມືອງອາດຈະສະໝັກເອົາທາງເລືອກຄວາມຄຸ້ມຄອງສຸຂະພາບອື່ນທີ່ມີໃຫ້ຜ່ານ *Washington Healthplanfinder* ເຊິ່ງເອີ້ນວ່າແຜນປະກັນສຸຂະພາບ ແລະ ແຂ້ວທີ່ມີຄຸນສົມບັດໄດ້ຮັບ (QHP/QDP). Washington Health Benefit Exchange ຮັບປະກັນ **ການຍົກເວັ້ນຂອງລັດຖະບານກາງ (ການຍົກເວັ້ນ 1332)** ທີ່ອະນຸຍາດໃຫ້ບຸກຄົນທີ່ບໍ່ມີສະຖານະການເຂົ້າເມືອງທີ່ລັດຖະບານກາງຮັບຮູ້
ຊື້ QHP ຜ່ານ *Washington Healthplanfinder*.

ທ່ານອາດຈະໄດ້ຮັບພິຈາລະນາສໍາລັບທາງເລືອກຄວາມຄຸ້ມຄອງການເບິ່ງແຍງສຸຂະພາບອື່ນສໍາລັບຜູ້ເຂົ້າເມືອງ, ລວມທັງຜູ້ທີ່ຍັງຕອບສະໜອງໄລຍະຫ້າປີບໍ່ທັນໄດ້. ທາງເລືອກຄວາມຄຸ້ມຄອງທີ່ມີໃຫ້ລວມມີ:

QHP ແລະ QDP ທີ່ມີໃຫ້ຜ່ານ *Washington Healthplanfinder*

- ຄົນທີ່ສົນໃຈຄວນສະໝັກຜ່ານ ***Washington Healthplanfinder***.

ໂຄງການ Apple Health ອື່ນໆ

- **Apple Health ສໍາລັບເດັກ**
- **Apple Health ສໍາລັບຄົນຖືພາ**
- **ການແພດສຸກເສີນ (AEM)**
- **ການບໍລິການດູແລທາງການແພດ (MCS)**
- **ການວາງແຜນຄອບຄົວເທົ່ານັ້ນ**

## ຂ້ອຍຈໍາເປັນຕ້ອງໃຫ້ຫຼັກຖານສະແດງລາຍຮັບຂອງຂ້ອຍໃນເວລາທີ່ຂ້ອຍສະໝັກເອົາ Apple Health Expansion ບໍ?

ທ່ານບໍ່ຈໍາເປັນຕ້ອງໃຫ້ຫຼັກຖານສະແດງລາຍຮັບຂອງທ່ານໃນເວລາທີ່ທ່ານສະໝັກເອົາ Apple Health Expansion ບໍ? ທ່ານອາດຈະໄດ້ຮັບຈົດໝາຍຂໍໃຫ້ສະໜອງຫຼັກຖານສະແດງລາຍຮັບ ຫຼັງຈາກລົງທະບຽນແລ້ວ. ຈົດໝາຍນີ້ຈະບອກວ່າທ່ານຄວນໃຫ້ເອກະສານປະເພດໃດແດ່. ຖ້າທ່ານໄດ້ຮັບຈົດໝາຍຂໍເອົາຂໍ້ມູນເພີ່ມເຕີມ ທ່ານຈະຈໍາເປັນຕ້ອງຕອບເພື່ອຫຼີກລຽງການປິດຄວາມຄຸ້ມຄອງຂອງທ່ານ.

### ຂ້ອຍໄດ້ຮັບຄຳຂໍໃຫ້ພິສູດຢັ້ງຢືນລາຍຮັບຂອງຂ້ອຍ ແລະ ອາໄສຢູ່ໃນຄົວເຮືອນທີ່ມີຫຼາຍຄົນ. ຂ້ອຍຄວນສົ່ງລາຍຮັບຂອງໃຜແດ່?

ສຳລັບບຸກຄົນທີ່ມີອາຍຸ 65 ປີຂຶ້ນໄປ:

- ການມີສິດຈະອີງໃສ່ລາຍຮັບທີ່ບຸກຄົນ ຫຼື ຄູ່ສົມລົດຂອງເຂົາເຈົ້າໄດ້ຮັບ ຫຼື ຫາໄດ້. ສະຖານະການຍື່ນເສຍພາສີຂອງບຸກຄົນບໍ່ເປັນປັດໄຈການມີສິດສຳລັບບຸກຄົນທີ່ມີອາຍຸ 65 ປີຂຶ້ນໄປ.

ສຳລັບບຸກຄົນທີ່ມີອາຍຸ 19-64 ປີ:

- ການມີສິດອີງໃສ່ຂໍ້ມູນລາຍຮັບສຳລັບຜູ້ໃຫຍ່ທຸກຄົນ ແລະ ເຍົາວະຊົນທັງໝົດທີ່ມີລາຍຮັບພຽງພໍທີ່ກຳນົດໃຫ້ເຂົາເຈົ້າຕ້ອງຍື່ນແຈ້ງເສຍພາສີ.

### ເປັນຫຍັງລູກຄ້າ Apple Health Expansion ຈຶ່ງໄດ້ຮັບການລົງທະບຽນເຂົ້າຮ່ວມການດູແລເບິ່ງແຍງແບບມີການຈັດການ ເມື່ອລູກຄ້າໃນໂຄງການ Apple Health ອື່ນທີ່ລັດໃຫ້ທຶນບໍ່ໄດ້ຮັບການລົງທະບຽນ?

ໂຄງສ້າງຂອງໂຄງການແຕກຕ່າງກັນ ໂດຍຂຶ້ນກັບປະຊາກອນທີ່ໃຫ້ບໍລິການ ແລະ ແຫຼ່ງທຶນ.

### ຂ້ອຍສາມາດເລືອກຈາກແຜນ Apple Health ໃດ?

ຖ້າທ່ານລົງທະບຽນເຂົ້າຮ່ວມ Apple Health Expansion, ທ່ານສາມາດເລືອກຈາກໜຶ່ງໃນແຜນສຸຂະພາບຕໍ່ໄປນີ້:

- Community Health Plan of Washington
- Coordinated Care
- Molina Healthcare
- UnitedHealthcare Community Plan

ເບິ່ງ **ແຜນທີ່ພື້ນທີ່ໃຫ້ບໍລິການຂອງ Apple Health Expansion** ເພື່ອເບິ່ງວ່າມີການໃຫ້ແຜນສຸຂະພາບໃດແດ່ໃນເຂດປົກຄອງຂອງທ່ານ.

ຖ້າລູກຄ້າບໍ່ເລືອກແຜນໜຶ່ງ, ຈະມີການລົງທະບຽນເຂົາເຈົ້າເຂົ້າໃນແຜນສຸຂະພາບໃດໜຶ່ງທີ່ມີໃຫ້ໃນເຂດປົກຄອງຂອງເຂົາເຈົ້າ.

### ຄວາມຄຸ້ມຄອງຂອງຂ້ອຍຈະເລີ່ມເມື່ອໃດ ຫຼັງຈາກໄດ້ຮັບອະນຸມັດສຳລັບ Apple Health Expansion?

ທ່ານຈະໄດ້ຮັບການລົງທະບຽນໃນມື້ທຳອິດຂອງເດືອນທີ່ທ່ານສະໝັກເອົາຄວາມຄຸ້ມຄອງ.

### ຈະເປັນແນວໃດຖ້າຂ້ອຍລົງທະບຽນເຂົ້າຮ່ວມ Apple Health Expansion ແລ້ວກາຍເປັນຖືພາ?

ໃຫ້ລາຍງານການປ່ຽນແປງ, ລວມທັງການຖືພາພາຍໃນ 30 ວັນ. ນີ້ຊ່ວຍຮັບປະກັນໃຫ້ມີການລົງທະບຽນທ່ານເຂົ້າໃນແຜນທີ່ຖືກຕ້ອງ. ຖ້າທ່ານລົງທະບຽນເຂົ້າຮ່ວມ Apple Health Expansion ແລະ ລາຍງານການຖືພາ, ທ່ານຈະປ່ຽນຜ່ານໄປຍັງ Apple Health ສຳລັບຄົນຖືພາ. ໂຄງການນີ້ໃຫ້ຄວາມຄຸ້ມຄອງແກ່ບຸກຄົນຖືພາທີ່ມີລາຍຮັບຢູ່ທີ່ ຫຼື ຕ່ຳກວ່າມາດຕະຖານລາຍຮັບຂອງ Apple Health.

### ຈະມີການໂອນຍ້າຍລູກຄ້າຈາກໂຄງການປັດຈຸບັນໄປຍັງ Apple Health Expansion ແນວໃດ?

ລູກຄ້າທີ່ປ່ຽນຜ່ານຈາກ AEM, Apple Health ສຳລັບຄົນຖືພາ, APC ຫຼື QHP ໄປຍັງ Apple Health Expansion ຈະມີໂອກາດເລືອກແຜນສຸຂະພາບ. ຖ້າລູກຄ້າບໍ່ເລືອກແຜນໜຶ່ງ, ຈະມີການລົງທະບຽນເຂົາເຈົ້າເຂົ້າໃນແຜນສຸຂະພາບໃດໜຶ່ງທີ່ມີໃຫ້ໃນເຂດປົກຄອງຂອງເຂົາເຈົ້າ.

## ການໃຊ້ຄວາມຄຸ້ມຄອງຂອງທ່ານ

### ມີຄ່າໃຊ້ຈ່າຍສຳລັບລູກຄ້າບໍໃນການລົງທະບຽນເຂົ້າຮ່ວມ ຫຼື ໃຊ້ຄວາມຄຸ້ມຄອງ Apple Health Expansion?

ບໍ່, ຄວາມຄຸ້ມຄອງ Apple Health Expansion ແມ່ນຟຣີ. ທ່ານຈະບໍ່ມີຄ່າໃຊ້ຈ່າຍຈາກຖົງຕົນເອງ ຫຼື ຄ່າຮ່ວມຈ່າຍເມື່ອທ່ານໃຊ້ການບໍລິການຕ່າງໆທີ່ Apple Health Expansion ຄຸ້ມຄອງ.

### Apple Health Expansion ຄຸ້ມຄອງການບໍລິການໃດແດ່?

Apple Health Expansion ຈະຄຸ້ມຄອງການບໍລິການສຸຂະພາບຮ່າງກາຍ ແລະ ພຶດຕິກຳ, ແຂ້ວ, ຄ່າການເດີນທາງທາງຍການແພດທີ່ບໍ່ສຸກເສີນ ແລະ ການບໍລິການລ່າມແປພາສາ. ການບໍລິການ ແລະ ການຊ່ວຍເຫຼືອໄລຍະຍາວບໍ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ Apple Health Expansion.

ເບິ່ງລາຍຊື່ເຕັມຂອງ **ການບໍລິການທີ່ Apple Health ຄຸ້ມຄອງ.**

### ຂໍ້ມູນຂອງຂ້ອຍຈະໄດ້ຮັບການປົກປ້ອງບໍ?

Apple Health Expansion ໃຊ້ມາດຕະຖານຄວາມເປັນສ່ວນຕົວ ແລະ ການປົກປ້ອງຂໍ້ມູນຂອງໂຄງການ Apple Health ທີ່ມີຢູ່ແລ້ວເພື່ອຮັບປະກັນໃຫ້ຕົວຕົນ ແລະ ຂໍ້ມູນຂອງລູກຄ້າເປັນຄວາມລັບ. ເບິ່ງ **ແຈ້ງການກ່ຽວກັບວິທີປະຕິບັດເລື່ອງຄວາມເປັນສ່ວນຕົວຂອງ HCA** ສຳລັບຂໍ້ມູນເພີ່ມເຕີມ.

ຖ້າບໍ່ມີຄຳສັ່ງສານ ຫຼື ຂໍ້ກຳນົດທາງກົດໝາຍອື່ນ, HCA ຈະບໍ່ເປີດເຜີຍຂໍ້ມູນລູກຄ້າກັບໜ່ວຍງານກວດຄົນເຂົ້າເມືອງໃດໆ, ລວມທັງສຳນັກງານກວດຄົນເຂົ້າເມືອງ ແລະ ພາສີສະຫະລັດ (Immigration and Customs Enforcement, ICE) ຫຼື ໜ່ວຍງານອື່ນໆຂອງລັດຖະບານກາງ. ການມີສິດໄດ້ຮັບ Apple Health Expansion ໄດ້ຮັບຍົກເວັ້ນຈາກການທົດສອບຄ່າພາກຫຼວງ. ເບິ່ງ **ປະກາດເພື່ອຮຽນຮູ້ເພີ່ມເຕີມ** (**Español**). ຖ້າທ່ານມີຄຳຖາມ ຫຼື ຄວາມກັງວົນໃຈກ່ຽວກັບວ່າການຂໍເອົາ Apple Health Expansion ອາດຈະກະທົບກັບສະຖານະການເຂົ້າເມືອງ ຫຼື ໂອກາດກາຍເປັນຜູ້ຢູ່ອາໄສຖາວອນ ຫຼື ພົນລະເມືອງຂອງທ່ານ, ໃຫ້ຕິດຕໍ່ທະນາຍຄວາມດ້ານການເຂົ້າເມືອງ.

## ຂໍ້ມູນເພີ່ມເຕີມ

### ຂ້ອຍສາມາດຮຽນຮູ້ເພີ່ມເຕີມກ່ຽວກັບ Apple Health Expansion ໄດ້ຢູ່ໃສ?

- **ແຜ່ນພັບສຳລັບລູກຄ້າ Apple Health Expansion** (ມີໃຫ້ເປັນ **15 ພາສາ**)
  - ເບິ່ງແຜ່ນພັບນີ້ເພື່ອຮຽນຮູ້ກ່ຽວກັບການບໍລິການທີ່ໄດ້ຮັບຄວາມຄຸ້ມຄອງ, ລາຍລະອຽດການມີສິດ ແລະ ບ່ອນສະໝັກ.
- **ອອນລາຍ**: **hca.wa.gov/apple-health-expansion**

ຖ້າທ່ານຊ່ວຍຜູ້ສະໝັກ Apple Health Expansion ຫຼື ຕ້ອງການຊ່ວຍບອກຕໍ່ ທ່ານສາມາດໃຊ້ເອກະສານສື່ສານຕໍ່ໄປນີ້ໄດ້. ເຫຼົ່ານີ້ລວມມີ:

- **ຊຸດເຄື່ອງມືການສື່ສານຂອງ Apple Health Expansion**
  - ໃຊ້ຊຸດເຄື່ອງມືນີ້ເພື່ອເບິ່ງ ແລະ ແບ່ງປັນຂໍ້ຄວາມສຳຄັນຕາມປະເພດຜູ້ຊົມ, ເອກະສານພິມເຜີຍແຜ່ແລະຊັບພະຍາກອນສຳລັບລູກຄ້າ, ຄຳແນະນຳການສ້າງແບຣນ ແລະ ພາສາແລະ **ຊຸດເຄື່ອງມືສື່ສັງຄົມ**.
- ການສຳມະນາຜ່ານເວັບ
  - ການສຳມະນາຜ່ານເວັບ ແລະ ສະໄລ້ບົດນຳສະເໜີຂອງ Apple Health Expansion ມີໃຫ້ທີ່ **hca.wa.gov/webinar**.
- ລົງທະບຽນຮັບອັບເດດ
  - ບຸກຄົນສາມາດລົງທະບຽນຮັບອັບເດດທາງອີເມວກ່ຽວກັບ **Apple Health Expansion**!

### ຄຳຖາມທີ່ກ່ຽວຂ້ອງກັບຄວາມຄຸ້ມຄອງສຸຂະພາບສຳລັບຄົນເຂົ້າເມືອງ QHP/QDP

- ຖ້າທ່ານມີຄຳຖາມກ່ຽວກັບວິທີສະໝັກເອົາ QHP/QDP ຫຼື Cascade Care Savings:
  - ອີເມວຫາ **ImmigrantCoverage@WAHBexchange.org**
  - ເຂົ້າໄປທີ່ ***webpage Washington Healthplanfinder***
    - ເບິ່ງເປັນ **Spanish**